ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 07 ປປທ

ນະຄອນຫຼວງວຽງຈັນ, ວັນທີ 14. 1. 2008

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສະກັດກັ້ນ
ແລະ ຕ້ານອັກຄີໄພ

---

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 102/ສພຊ, ລົງວັນທີ 24 ທັນວາ 2007 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 10 ມັງກອນ 2008.

*ປະທານປະເທດ*

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :***

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 102 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ

## ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະຕ້ານອັກຄີໄພ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສະກັດກັ້ນ ແລະຕ້ານອັກຄີໄພ ໃນວາລະປະຊຸມຕອນບ່າຍຂອງວັນທີ 24 ທັນວາ 2007

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 24 ທັນວາ 2007

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ສະພາແຫ່ງຊາດ ເລກທີ 09 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 24 ທັນວາ 2007

# ກົດໝາຍ
# ວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບນີ້ ກຳນົດຫລັກການ, ລະບຽບການ, ມາດຕະການຕ່າງໆກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອໃຫ້ທົ່ວປວງຊົນ ມີສະຕິເປັນເຈົ້າການຕໍ່ວຽກງານດັ່ງກ່າວ, ເຮັດໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ມີຄວາມໜັກແໜ້ນ, ເຂັ້ມແຂງ, ຊຳນິຊຳນານທາງດ້ານວິຊາສະເພາະ, ມີແບບແຜນວິທີເຮັດວຽກທີ່ວ່ອງໄວ, ທັນສະໄໝເທື່ອລະກ້າວ, ຮັບປະກັນການສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ທັນການ ແລະ ມີປະສິດທິຜົນ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ປອດໄພທາງດ້ານອັກຄີໄພ.

### ມາດຕາ 2. ການສະກັດກັ້ນ ແລະ ການຕ້ານອັກຄີໄພ

**ອັກຄີໄພ** ແມ່ນ ໄພອັນຕະລາຍທີ່ເກີດຈາກໄຟໄໝ້ ຊຶ່ງສ້າງຜົນເສຍຫາຍຕໍ່ສຸຂະພາບ, ຮ່າງກາຍ, ຊີວິດ, ຊັບສິນ ແລະ ສົ່ງຜົນກະທົບຕໍ່ສະພາບແວດລ້ອມ.

**ການສະກັດກັ້ນອັກຄີໄພ** ແມ່ນ ການວາງແຜນປ້ອງກັນອັກຄີໄພໄວ້ລ່ວງໜ້າ ດ້ວຍການສ້າງລະບົບປ້ອງກັນອັກຄີໄພ, ການກວດກາເຕັກນິກ, ການນຳໃຊ້ມາດຕະການຕ່າງໆ, ການໂຄສະນາ, ການສຶກສາອົບຮົມ, ການແນະນຳ ເພື່ອບໍ່ໃຫ້ອັກຄີໄພເກີດຂຶ້ນ.

**ການຕ້ານອັກຄີໄພ** ແມ່ນ ການນຳໃຊ້ ພາຫະນະ, ວັດຖຸອຸປະກອນ, ກຳລັງ ແລະ ຍຸດທະວິທີ ເຂົ້າໃນການມອດໄຟ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການໄໝ້** ໝາຍເຖິງ ການເກີດປະຕິກິລິຍາທາງວັດຖຸ, ເຄມີ, ແຜ່ຄວາມຮ້ອນ ແລະ ກະຈາຍແສງສະຫວ່າງ;
2. **ທາດທີ່ເປັນອັນຕະລາຍຕໍ່ການໄໝ້ ລະເບີດ** ໝາຍເຖິງ ທາດແຂງ, ທາດແຫລວ ແລະ ທາດອາຍ ທີ່ຕິດໄຟ ແລະ ລຸກໄໝ້ໄດ້ງ່າຍ;
3. **ວັດຖຸໄວໄຟ** ໝາຍເຖິງ ວັດຖຸ ແລະ ທາດທີ່ຕິດໄຟໄດ້ໄວ ເຊັ່ນ: ນ້ຳມັນ, ອາຍແກັດ ແລະ ໝໍ້;
4. **ພື້ນທີ່ຕ້ານອັກຄີໄພ** ໝາຍເຖິງ ບໍລິເວນ ສະຖານທີ່ບ່ອນເກີດໄຟໄໝ້ ຊຶ່ງກຳລັງເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ ພວມເຮັດໜ້າທີ່ມອດໄຟ;
5. **ກຳລັງຄຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ** ໝາຍເຖິງ ກຳລັງອາຊີບທີ່ເຮັດໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;
6. **ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ ອົງການ** ໝາຍເຖິງ ກຳລັງອາຊີບ ແລະ ເຄິ່ງອາຊີບ ທີ່ສັງກັດຢູ່ນຳສຳນັກງານ ອົງການຕ່າງໆ;
7. **ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ** ໝາຍເຖິງ ກຳລັງອາສາສະໝັກຂອງປະຊາຊົນ ພາຍໃນບ້ານ;
8. **ສຳນັກງານ ອົງການ** ໝາຍເຖິງ ການຈັດຕັ້ງຂອງລັດ, ພື້ນຖານເສດຖະກິດ ແລະ ວັດທະນະທຳ-ສັງຄົມ;
9. **ມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ** ໝາຍເຖິງ ການກຳນົດຫລັກການ, ລະບຽບການ ແລະ ຄຸນນະພາບກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ.

**ມາດຕາ 4. ນະໂຍບາຍກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ**

ລັດ ກໍ່ສ້າງ ແລະ ພັດທະນາກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ທັນສະໄໝເທື່ອລະກ້າວ ເພື່ອຮັບປະກັນຄວາມສະຫງົບໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ.

ລັດ ປຸກລະດົມ, ໂຄສະນາ, ສຶກສາອົບຮົມທົ່ວປວງຊົນໃຫ້ຮູ້ໜ້າທີ່ ແລະ ມີສະຕິເປັນເຈົ້າການ ໃນການສະກັດກັ້ນ ແລະ ຕ້ານອັກຄີໄພ, ປະກອບສ່ວນດ້ານກຳລັງ, ພາຫະນະ, ວັດຖຸອຸປະກອນ ແລະ ຊັບສິນ ເຂົ້າໃນວຽກງານດັ່ງກ່າວ.

ລັດ ສົ່ງເສີມບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ລວມທັງ ການປະກອບສ່ວນຊ່ວຍເຫລືອໃຫ້ແກ່ວຽກງານດັ່ງກ່າວ.

**ມາດຕາ 5. ການກຳນົດ ມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ**

ອົງການທີ່ກ່ຽວຂ້ອງ ຄົ້ນຄວ້າ, ກຳນົດ ມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ພົວພັນເຖິງວຽກງານຂອງຕົນ ໂດຍປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ແລ້ວສະເໜີຕໍ່ລັດຖະບານ ພິຈາລະນາຮັບຮອງ.

ບຸກຄົນ ແລະ ການຈັດຕັ້ງ ຕ້ອງປະຕິບັດຕາມມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ໄດ້ກໍານົດໄວ້.

ການນໍາໃຊ້ມາດຕະຖານເຕັກນິກສະກັດກັ້ນ ແລະ ຕ້ານອັກຄີໄພຂອງຕ່າງປະເທດ ຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

## ມາດຕາ 6. ຫລັກການສະກັດກັ້ນ ແລະ ຕ້ານອັກຄີໄພ

ໃນການສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:

1. ການສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ມີການເຂົ້າຮ່ວມຂອງທົ່ວປວງຊົນ;
2. ການສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງເລີ່ມຈາກບຸກຄົນ, ຄອບຄົວ, ບ້ານ ແລະ ສໍານັກງານ ອົງການ;
3. ການສະກັດກັ້ນອັກຄີໄພ ໃຫ້ຖືເປັນວຽກງານຕົ້ນຕໍ, ການຕ້ານອັກຄີໄພ ໃຫ້ຖືເປັນບັນຫາສໍາຄັນ;
4. ກໍາລັງ, ພາຫະນະ, ວັດຖຸອຸປະກອນ, ແຜນການຕ້ານອັກຄີໄພ ແລະ ເງື່ອນໄຂອື່ນ ຕ້ອງໃຫ້ມີການກະກຽມ ແລະ ຮັບປະກັນ ເພື່ອດັບມອດໄຟໃຫ້ທັນການ ແລະ ມີປະສິດທິຜົນ;
5. ການຕ້ານອັກຄີໄພ ຕ້ອງເລີ່ມຈາກກໍາລັງກັບທີ່;
6. ການຕ້ານອັກຄີໄພ ຕ້ອງຈໍາກັດຜົນເສຍຫາຍໃຫ້ໜ້ອຍທີ່ສຸດ.

## ມາດຕາ 7. ພັນທະ ແລະ ໜ້າທີ່ ຕໍ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ

ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ພັນທະ, ໜ້າທີ່ຂອງທົ່ວປວງຊົນ, ກະຊວງ, ສໍານັກງານ ອົງການ, ອົງການປົກຄອງທ້ອງຖິ່ນ, ບ້ານ, ຄອບຄົວ, ບຸກຄົນ ລວມທັງ ຊາວຕ່າງດ້າວ, ຄົນຕ່າງປະເທດ, ບຸກຄົນທີ່ບໍ່ມີສັນຊາດ ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດ ຢູ່ ສປປ ລາວ.

ບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ ຍັງມີພັນທະປະກອບສ່ວນສະໜອງວັດຖຸ, ຊັບສິນ, ພາຫະນະ, ວັດຖຸອຸປະກອນອື່ນ ທີ່ຈໍາເປັນໃຫ້ແກ່ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ.

ພົນລະເມືອງລາວ ແລະ ຊາວຕ່າງດ້າວ ທີ່ມີອາຍຸແຕ່ສິບແປດປີຂຶ້ນໄປ, ມີສຸຂະພາບສົມບູນ, ແຂງແຮງ ມີໜ້າທີ່ເຂົ້າຮ່ວມໜ່ວຍສະກັດກັ້ນ ແລະ ຕ້ານອັກຄີໄພ ບ່ອນທີ່ຕົນສັງກັດ ແລະ ອາໄສຢູ່.

ສໍານັກງານ ອົງການ, ບ້ານ, ຄອບຄົວ ມີໜ້າທີ່ເຜີຍແຜ່, ແນະນໍາ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງເປັນປົກກະຕິ.

## ມາດຕາ 8. ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ບົນພື້ນຖານແນວທາງການຕ່າງປະເທດຂອງ ສປປ ລາວ ດ້ວຍການຮ່ວມມື ແລກປ່ຽນບົດຮຽນ, ເຕັກໂນໂລຊີ, ການກໍ່ສ້າງ ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ໃຫ້ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ.

ໃນກໍລະນີທີ່ມີໄຟໄໝ້ໃຫຍ່ເກີດຂຶ້ນ ລັດ ສປປ ລາວ ຈະຂໍການຊ່ວຍເຫລືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເຂົ້າໃນການຕ້ານອັກຄີໄພ ກໍໄດ້.

ລັດ ສປປ ລາວ ກຽມພ້ອມຊ່ວຍເຫລືອບັນດາປະເທດ ທີ່ຮ້ອງຂໍກ່ຽວກັບວຽກງານຕ້ານອັກຄີໄພ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ.

## ໝວດທີ II
## ການສະກັດກັ້ນອັກຄີໄພ

**ມາດຕາ 9. ວິທີການພື້ນຖານໃນການສະກັດກັ້ນອັກຄີໄພ**

ວິທີການພື້ນຖານໃນການສະກັດກັ້ນອັກຄີໄພ ມີດັ່ງນີ້:

1. ໂຄສະນາ ສຶກສາອົບຮົມໃຫ້ທົ່ວປວງຊົນ ມີສະຕິຕໍ່ວຽກງານສະກັດກັ້ນອັກຄີໄພ ດ້ວຍຮູບການ ແລະ ວິທີການຕ່າງໆ;
2. ສ້າງແຜນສະກັດກັ້ນອັກຄີໄພໄວ້ລ່ວງໜ້າ;
3. ຄຸ້ມຄອງ ວັດຖຸໄວໄຟ, ທາດໄໝ້ ທາດລະເບີດ, ແຫລ່ງໄຟ, ໄຟຟ້າ, ແຫລ່ງຄວາມຮ້ອນ, ພາຫະນະ, ເຄື່ອງມື, ວັດຖຸອຸປະກອນທີ່ພາໃຫ້ເກີດໄຟໄໝ້ ລະເບີດ ຢ່າງເຂັ້ມງວດ, ນໍາໃຊ້ ໃຫ້ຖືກຕ້ອງຕາມຫລັກການ ແລະ ຮັບປະກັນຄວາມປອດໄພ;
4. ມີການກວດກາຢ່າງເປັນປະຈໍາ ເພື່ອແກ້ໄຂຂໍ້ຂາດຕົກບົກຜ່ອງຢ່າງທັນການ.

**ມາດຕາ 10. ແຜນສະກັດກັ້ນອັກຄີໄພ**

ແຜນສະກັດກັ້ນອັກຄີໄພ ຕ້ອງຮັບປະກັນໃຫ້ມີເນື້ອໃນ ດັ່ງນີ້:

1. ລະບຽບການສະກັດກັ້ນອັກຄີໄພ;
2. ແຜນໂຄສະນາ, ເຜີຍແຜ່, ແນະນໍາ, ກວດກາ, ຕັກເຕືອນບຸກຄົນ ແລະ ການຈັດຕັ້ງກ່ຽວກັບວຽກງານສະກັດກັ້ນອັກຄີໄພ;
3. ແຜນວາດພື້ນທີ່ຂອງສໍານັກງານ ອົງການ;
4. ແຜນຕິດຕັ້ງລະບົບສະກັດກັ້ນອັກຄີໄພເຊັ່ນ: ລະບົບມອດໄຟ, ຕັດໄຟຟ້າອັດຕະໂນມັດ;
5. ແຜນລະບົບເຕືອນໄພ ແລະ ລະບາຍອາກາດ;
6. ແຜນໜີໄຟ, ທາງໜີໄຟ, ຂັ້ນໄດສຸກເສີນ;
7. ແຜນຕິດຕັ້ງວັດຖຸອຸປະກອນ, ກ໋ອກນໍ້າ ແລະ ສ້າງອ່າງເກັບນໍ້າ;
8. ການກະກຽມ ກໍາລັງພົນ, ງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນສະກັດກັ້ນອັກຄີໄພ;
9. ແຜນການຈັດຕັ້ງການບໍາລຸງ ແລະ ຝຶກຊ້ອມກໍາລັງ.

**ມາດຕາ 11. ການກວດຜ່ານການອອກແບບກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ**

ການຈັດສັນ ໂຄງການກໍ່ສ້າງໃໝ່ ຫລື ການດັດແປງຕົວເມືອງ, ເຂດຊຸມຊົນ, ເຂດວັດທະນະທໍາ, ເຂດເສດຖະກິດ, ເຂດອຸດສາຫະກໍາ, ເຂດທໍາການຜະລິດ, ເຂດປ່າໄມ້ ຕ້ອງອອກແບບ ຫລື ດັດແກ້ແຜນສະກັດກັ້ນອັກຄີໄພ ເພື່ອຮັບປະກັນຄວາມປອດໄພ ແລະ ຕ້ອງປະຕິບັດດັ່ງນີ້:

1. ກຳນົດພື້ນທີ່ຈັດສັນ ແລະ ຂອບເຂດການກໍ່ສ້າງ;
2. ຕ້ອງມີລະບົບເສັ້ນທາງຄົມມະນາຄົມ ແລະ ແຫລ່ງນ້ຳ;
3. ຕ້ອງຈັດວາງສະຖານທີ່ໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເໝາະສົມ;
4. ຕ້ອງຂຶ້ນແຜນງົບປະມານ, ພາຫະນະ, ວັດຖຸອຸປະກອນສະກັດກັ້ນອັກຄີໄພ;
5. ມີເງື່ອນໄຂອື່ນ ເພື່ອສະໜອງໃຫ້ແກ່ວຽກງານສະກັດກັ້ນອັກຄີໄພ.

ການກໍ່ສ້າງໃໝ່, ການດັດແປງ ຫລື ປ່ຽນແປງລັກສະນະນຳໃຊ້ ຕ້ອງອອກແບບ ຫລື ດັດແກ້ ແຜນສະກັດກັ້ນອັກຄີໄພ ເພື່ອຮັບປະກັນຄວາມປອດໄພ ແລະ ຕ້ອງປະຕິບັດດັ່ງນີ້:

1. ຕ້ອງມີໄລຍະຫ່າງລະຫວ່າງສະຖານທີ່ກໍ່ສ້າງ ເພື່ອໃຫ້ມີຄວາມປອດໄພ;
2. ມີລະບົບສະກັດກັ້ນອັກຄີໄພ;
3. ມີລະບົບທາງໜີໄພ;
4. ຕ້ອງມີງົບປະມານ, ພາຫະນະ, ວັດຖຸອຸປະກອນສະກັດກັ້ນອັກຄີໄພ;
5. ມີເງື່ອນໄຂອື່ນ ເພື່ອສະໜອງໃຫ້ແກ່ວຽກງານສະກັດກັ້ນອັກຄີໄພ.

ບັນດາໂຄງການກໍ່ສ້າງ ຫລື ການດັດແປງ ທີ່ໄດ້ກ່າວໄວ້ໃນວັກ 1 ແລະ ວັກ 2 ຂອງມາດຕາ ນີ້ ຕ້ອງໄດ້ຮັບການກວດຜ່ານຈາກກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມການແບ່ງ ຂັ້ນຄຸ້ມຄອງ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ.

**ມາດຕາ 12. ການສະກັດກັ້ນອັກຄີໄພໃນການກໍ່ສ້າງ ແລະ ນຳໃຊ້ກິດຈະການ**

ບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ກ່ອນຈະດຳເນີນ ການກໍ່ສ້າງ ແລະ ນຳໃຊ້ກິດຈະການທີ່ມີຄວາມສ່ຽງຕໍ່ການໄໝ້ ລະເບີດ ຕ້ອງນຳເອົາແຜນຜັງໂຄງ ການ, ແຜນຜັງລະບົບສະກັດກັ້ນອັກຄີໄພ ໄປຜ່ານກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອពិຈາລະນາ ອະນຸຍາດ.

**ມາດຕາ 13. ເປົ້າໝາຍໃນການສະກັດກັ້ນອັກຄີໄພ**

ເປົ້າໝາຍຕົ້ນຕໍໃນການສະກັດກັ້ນອັກຄີໄພ ມີດັ່ງນີ້:

1. ເຄຫະສະຖານ ແລະ ເຂດຊຸມຊົນ;
2. ພາຫະນະຂົນສົ່ງ;
3. ສຳນັກງານ ອົງການ;
4. ອາຄານສູງ;
5. ໂຮງແຮມ, ເຮືອນພັກ, ສະຖານທີ່ບັນເທີງ, ສະຖານທີ່ໂຮມຊຸມນຸມ, ໂຮງຊຽນ ແລະ ໂຮງໝໍ;
6. ກິດຈະການເທິງໜ້ານ້ຳ ແລະ ໃຕ້ດິນ;
7. ການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງວັດຖຸອຸປະກອນ ໄຟຟ້າ;
8. ຕະຫລາດ, ສູນການຄ້າ ແລະ ລະບົບສາງ;
9. ທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ ແລະ ສະຖານີລົດໄຟ;

10. ສະໜາມບິນ;

11. ປ່າໄມ້;

12. ວັດຖຸໄວໄຟ;

13. ສະຖານທູດ, ສໍານັກງານ ແລະ ອົງການຈັດຕັ້ງສາກົນ.

**ມາດຕາ 14. ການສະກັດກັ້ນອັກຄີໄພ ໃນເຄຫະສະຖານ ແລະ ເຂດຊຸມຊົນ**

ການສະກັດກັ້ນອັກຄີໄພ ໃນເຄຫະສະຖານ ແລະ ເຂດຊຸມຊົນ ຕ້ອງປະຕິບັດດັ່ງນີ້:

1. ເຄຫະສະຖານ ເປັນຕົ້ນ ເຮືອນຢູ່ອາໃສ ຕ້ອງຕິດຕັ້ງລະບົບໄຟຟ້າໃຫ້ຖືກຕ້ອງຕາມເຕັກນິກ, ກະກຽມພາຫະນະ, ວັດຖຸອຸປະກອນ ແລະ ເງື່ອນໄຂຕ່າງໆ ເພື່ອກຽມພ້ອມສະກັດກັ້ນອັກຄີໄພ.

   ເຕົາໄຟ, ຮ້ານບູຊາ ຕ້ອງໃຫ້ຮັບປະກັນຄວາມປອດໄພ. ບັນດາທາດໄໝ້ ລະເບີດງ່າຍ ຕ້ອງຈັດວາງຫ່າງໄກຈາກແຫລ່ງໄຟ ແລະ ແຫລ່ງຄວາມຮ້ອນ;
2. ເຂດຊຸມຊົນ, ບ້ານ, ໜ່ວຍ ຕ້ອງມີລະບຽບການສະກັດກັ້ນ ແລະ ຕ້ານອັກຄີໄພ ໂດຍສະເພາະ ແມ່ນ ກ່ຽວກັບການນໍາໃຊ້ໄຟ, ໄຟຟ້າ ແລະ ບັນດາທາດໄໝ້ ລະເບີດງ່າຍ;
3. ການສະກັດກັ້ນໄຟໄໝ້ລາມ ຕ້ອງມີ ວິທີການ, ແຜນການ, ກໍາລັງ, ພາຫະນະ, ວັດຖຸອຸປະກອນ, ເສັ້ນທາງ ແລະ ແຫລ່ງນໍ້າ.

**ມາດຕາ 15. ການສະກັດກັ້ນອັກຄີໄພ ໃນພາຫະນະຂົນສົ່ງ**

ພາຫະນະບັນທຸກ ວັດຖຸໄວໄຟ, ທາດໄໝ້, ທາດລະເບີດ, ສິນຄ້າ, ພາຫະນະຂົນສົ່ງໂດຍສານແຕ່ສີ່ບ່ອນນັ່ງຂຶ້ນໄປ ແລະ ພາຫະນະຂົນສົ່ງອື່ນ ຕ້ອງປະຕິບັດຕາມລະບຽບການສະກັດກັ້ນ ແລະ ຕ້ານອັກຄີໄພ.

ພາຫະນະຂົນສົ່ງ ວັດຖຸໄວໄຟ, ທາດໄໝ້, ທາດລະເບີດ, ແຮ່ທາດ ທີ່ປະກອບ ຫລື ດັດແປງໃໝ່ ຕ້ອງໄດ້ຮັບອະນຸຍາດຈາກກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ.

ພາຫະນະຂົນສົ່ງທຸກປະເພດ ຂອງອົງການຈັດຕັ້ງສາກົນ, ຄົນຕ່າງປະເທດທີ່ນໍາເຂົ້າ ສປປ ລາວ ຕ້ອງຮັບປະກັນຄວາມປອດໄພ ທາງດ້ານອັກຄີໄພ ຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 16. ການສະກັດກັ້ນອັກຄີໄພ ໃນສໍານັກງານ ອົງການ**

ການສະກັດກັ້ນອັກຄີໄພ ໃນສໍານັກງານ ອົງການ ຕ້ອງປະຕິບັດດັ່ງນີ້:

1. ວາງລະບຽບການ ກ່ຽວກັບການສະກັດກັ້ນອັກຄີໄພ;
2. ຕິດຕັ້ງລະບົບສັນຍານເຕືອນໄຟໄໝ້;
3. ວາງລະບົບສະກັດກັ້ນອັກຄີໄພ ເຊັ່ນ: ລະບົບການ ມອດໄຟ, ຕັດໄຟຟ້າ ອັດຕະໂນມັດ;
4. ກະກຽມກໍາລັງ, ພາຫະນະ, ວັດຖຸອຸປະກອນ, ແຫລ່ງນໍ້າ;
5. ສ້າງແຜນ ສະກັດກັ້ນອັກຄີໄພ, ໜີໄຟ, ຊ່ວຍເຫລືອຄົນ, ກອບກູ້ຊັບສິນ ແລະ ສະກັດກັ້ນໄຟໄໝ້ລາມ;
6. ມີແຫລ່ງງົບປະມານສະເພາະ ເພື່ອຮັບໃຊ້ວຽກງານສະກັດກັ້ນອັກຄີໄພ;

7. ມີເອກະສານຕິດຕາມ, ຄຸ້ມຄອງການປະຕິບັດໜ້າທີ່ວຽກງານສະກັດກັ້ນອັກຄີໄພ.

**ມາດຕາ 17. ການສະກັດກັ້ນອັກຄີໄພ ໃນອາຄານສູງ**

ອາຄານສູງ ຕ້ອງມີ ແຜນການ ແລະ ລະບົບສະກັດກັ້ນອັກຄີໄພ ເຊັ່ນ: ລະບົບເຕືອນໄຟ, ລະບົບເຕືອນຄວັນ, ລະບົບຕັດໄຟຟ້າ, ລະບົບທໍ່ອາກນ້ຳມອດໄຟ, ລະບົບມອດໄຟ ອັດຕະໂນມັດ, ລະບົບທາງໜີໄຟ, ຂັ້ນໄດສຸກເສີນ, ໄຟສຸກເສີນ, ໄຟເບື້ອງທາງ, ລະບົບລະບາຍອາກາດ, ແຜນກູ້ໄພ, ເຄື່ອງໝາຍໜີໄຟ, ຜັງໜີໄຟ ແລະ ຕ້ອງຮັບປະກັນການມອດໄຟໃນເບື້ອງຕົ້ນດ້ວຍຕົນເອງ.

**ມາດຕາ 18. ການສະກັດກັ້ນອັກຄີໄພ ຢູ່ໂຮງແຮມ, ເຮືອນພັກ, ສະຖານທີ່ບັນເທີງ, ສະຖານທີ່ໂຮມຊຸມນຸມ, ໂຮງຮຽນ ແລະ ໂຮງໝໍ**

ການສະກັດກັ້ນອັກຄີໄພ ຢູ່ໂຮງແຮມ, ເຮືອນພັກ, ສະຖານທີ່ບັນເທີງ, ສະຖານທີ່ໂຮມຊຸມນຸມ, ໂຮງຮຽນ ແລະ ໂຮງໝໍ ຕ້ອງມີແຜນການ ແລະ ລະບົບສະກັດກັ້ນອັກຄີໄພ, ສັນຍານເຕືອນໄພ, ແຜນໜີໄພ, ມີກຳລັງແນະນຳທາງອອກສຸກເສີນ, ຊ່ວຍເຫຼືອບຸກຄົນທີ່ບໍ່ມີຄວາມສາມາດໜີໄຟດ້ວຍຕົນເອງໄດ້, ມີແຜນການສົມທົບກັບກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 19. ການສະກັດກັ້ນອັກຄີໄພ ໃນກິດຈະການເຊື້ອໝັ້ນເຫຼົ້າ ແລະ ໃຕ້ດິນ**

ການດຳເນີນກິດຈະການເຊື້ອໝັ້ນເຫຼົ້າ ທີ່ມີຄວາມເປັນອັນຕະລາຍເຖິງການໄໝ້ ລະເບີດ ຕ້ອງມີແຜນສະກັດກັ້ນອັກຄີໄພ, ມີກຳລັງ, ພາຫະນະ ແລະ ວັດຖຸອຸປະກອນ ເພື່ອສະກັດກັ້ນອັກຄີໄພ.

ການດຳເນີນກິດຈະການໃຕ້ດິນ, ທາງໃຕ້ດິນ, ກິດຈະການຂຸດຄົ້ນຊັບພະຍາກອນທຳມະຊາດຕ່າງໆ ຕ້ອງຕິດຕັ້ງລະບົບສະກັດກັ້ນອັກຄີໄພ, ແຜນໜີໄພ, ພາຫະນະ, ວັດຖຸອຸປະກອນ ເຊັ່ນ: ເຄື່ອງເຕືອນໄພອັດຕະໂນມັດ, ເຄື່ອງແກ້ໄຂທາດອາຍ, ທາດເບື່ອ, ຄວັນ, ລະບົບລະບາຍອາກາດ ແລະ ຮັບປະກັນການເຂົ້າ-ອອກ ຂອງກຳລັງ ແລະ ພາຫະນະ.

**ມາດຕາ 20. ການສະກັດກັ້ນອັກຄີໄພ ໃນການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງວັດຖຸອຸປະກອນໄຟຟ້າ**

ການສະກັດກັ້ນອັກຄີໄພ ໃນການຜະລິດ, ການຈຳໜ່າຍໄຟຟ້າ, ການນຳເຂົ້າ ແລະ ການຕິດຕັ້ງວັດຖຸອຸປະກອນໄຟຟ້າ ຕ້ອງປະຕິບັດດັ່ງນີ້:

1. ໂຮງງານຜະລິດໄຟຟ້າ, ສະຖານີຈ່າຍກະແສໄຟຟ້າ, ໝໍ້ແປງໄຟຟ້າ, ການຕິດຕັ້ງໄຟຟ້າ ລວມທັງ ການນຳໃຊ້ໄຟຟ້າ ຕ້ອງມີວິທີການສະກັດກັ້ນ ເພື່ອບໍ່ໃຫ້ອັກຄີໄພເກີດຂຶ້ນ;
2. ວັດຖຸອຸປະກອນໄຟຟ້າທີ່ນຳໃຊ້ໃນສະຖານທີ່ ທີ່ມີຄວາມສ່ຽງຕໍ່ການໄໝ້ ລະເບີດ ຕ້ອງໃຫ້ມີຄຸນນະພາບສູງ, ໄດ້ມາດຕະຖານເຕັກນິກຂອງໄຟຟ້າ ແລະ ຮັບປະກັນຄວາມປອດໄພ;

3. ບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງໄຟຟ້າ ຫລື ຕິດຕັ້ງວັດຖຸອຸປະກອນໄຟຟ້າ ຕ້ອງຮັບຜິດຊອບທາງດ້ານມາດຕະຖານເຕັກນິກ ພ້ອມທັງ ແນະນຳວິທີການນຳໃຊ້ ແລະ ຮັກສາຄວາມປອດໄພ ໃຫ້ຜູ້ຊົມໃຊ້;
4. ການຜະລິດ ຫລື ນຳເຂົ້າ ວັດຖຸອຸປະກອນໄຟຟ້າ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 21. ການສະກັດກັ້ນອັກຄີໄພ ໃນຕະຫລາດ, ສູນການຄ້າ ແລະ ລະບົບສາງ**

ການສະກັດກັ້ນອັກຄີໄພ ໃນຕະຫລາດ, ສູນການຄ້າ ແລະ ລະບົບສາງ ຕ້ອງປະຕິບັດດັ່ງນີ້:

1. ຕະຫລາດ, ສູນການຄ້າ ຕ້ອງແຍກໄຟຟ້າອອກເປັນລະບົບສະເພາະຄື: ລະບົບໄຟຟ້າຮັບໃຊ້ ທຸລະກິດ, ຊີວິດປະຈຳວັນ, ການສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ຮ້ານຂາຍເຄື່ອງ ຕ້ອງໃຫ້ຈັດສັນເປັນລະບົບ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ;
3. ລະບົບສາງ ຕ້ອງແຍກໄຟຟ້າອອກເປັນລະບົບສະເພາະຄື: ໄຟຟ້າຮັບໃຊ້ພາຍໃນສາງ, ການສະກັດກັ້ນ ແລະ ຕ້ານອັກຄີໄພ, ຈັດມ້ຽນວັດຖຸເຄື່ອງຂອງໃນສາງໃຫ້ເປັນລະບົບ ເພື່ອຮັບປະກັນຄວາມປອດໄພທາງດ້ານອັກຄີໄພ.

ສຳລັບສາງເກັບມ້ຽນວັດຖຸໄວໄຟ, ທາດໄວໄຟ ລະເບີດ ຕ້ອງຈັດວາງໃຫ້ເປັນລະບົບສະເພາະ ແລະ ໃຫ້ມີລະບົບສະກັດກັ້ນອັກຄີໄພ ທີ່ທັນສະໄໝ.

**ມາດຕາ 22. ການສະກັດກັ້ນອັກຄີໄພ ໃນທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ ແລະ ສະຖານີລົດໄຟ**

ການສະກັດກັ້ນອັກຄີໄພ ໃນທ່າເຮືອ, ສະຖານີລົດຂົນສົ່ງໂດຍສານ ແລະ ສະຖານີລົດໄຟ ຕ້ອງຈັດຕັ້ງກຳລັງ, ພາຫະນະ, ວັດຖຸອຸປະກອນສະກັດກັ້ນອັກຄີໄພ, ມີແຜນໜີໄຟ, ແຜນລະບາຍພາຫະນະ, ແຜນຍົກຍ້າຍ ວັດຖຸເຄື່ອງຂອງ ແລະ ສິນຄ້າ ໃນກໍລະນີທີ່ມີອັກຄີໄພເກີດຂຶ້ນ.

**ມາດຕາ 23. ການສະກັດກັ້ນອັກຄີໄພ ໃນສະໜາມບິນ**

ການສະກັດກັ້ນອັກຄີໄພ ໃນສະໜາມບິນ ຕ້ອງປະຕິບັດດັ່ງນີ້:

1. ວາງແຜນສະກັດກັ້ນອັກຄີໄພ;
2. ຈັດຕັ້ງໃຫ້ມີກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພອາຊີບ ແລະ ມີການຝຶກຊ້ອມຕ້ານອັກຄີໄພ, ກູ້ໄພ ເປັນປະຈຳ;
3. ຕ້ອງປະກອບພາຫະນະ, ວັດຖຸອຸປະກອນສະກັດກັ້ນອັກຄີໄພ ແລະ ກູ້ໄພ ທີ່ທັນສະໄໝ;
4. ຕິດຕັ້ງລະບົບສະກັດກັ້ນອັກຄີໄພໃສ່ເຮືອບິນ, ທຸກອາຄານສະຖານທີ່ຕ່າງໆ ຂອງສະໜາມບິນໃຫ້ພຽງພໍ;
5. ປະສານສົມທົບວຽກງານວິຊາສະເພາະກັບກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປະຈຳ.

**ມາດຕາ 24. ການສະກັດກັ້ນໄຟໄໝ້ປ່າ**

ການສະກັດກັ້ນໄຟໄໝ້ປ່າ ຕ້ອງປະຕິບັດດັ່ງນີ້:

1. ການວາງແຜນສະກັດກັ້ນອັກຄີໄພ ໃຫ້ເລີ່ມຈາກການວາງແຜນປູກປ່າ ແລະ ການຂຸດຄົ້ນໄມ້;
2. ສຳນັກງານ ອົງການ, ບ້ານ, ເຮືອນ, ເສັ້ນທາງຄົມມະນາຄົມ, ທາງທໍ່ສົ່ງທາດທີ່ເປັນອັນຕະລາຍໄໝ້ ລະເບີດ ທີ່ຕັ້ງຢູ່ແຄມປ່າ ຫລື ຢູ່ໃນປ່າ ຕ້ອງຮັບປະກັນໄລຍະຫ່າງໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກຄວາມປອດໄພທາງດ້ານອັກຄີໄພ;
3. ສາຍໄຟຟ້າແຮງສູງທີ່ເນັ່ງຜ່ານປ່າ ຕ້ອງຮັບປະກັນຄວາມສູງ ແລະ ໄລຍະຫ່າງ ຕາມມາດຕະຖານເຕັກນິກຄວາມປອດໄພທາງດ້ານອັກຄີໄພ;
4. ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດທີ່ເຄື່ອນໄຫວໄປມາຕາມປ່າ ຫລື ແຄມປ່າ ຕ້ອງມີຄວາມລະມັດລະວັງໃນການດັງໄຟ, ຖິ້ມກົ້ນກອກຢາ ຫລື ນຳໃຊ້ໄຟທຸກຊະນິດ;
5. ການເຜົາຖ່ານ, ການເຮັດໄຮ່, ການເຮັດສວນ ແລະ ອື່ນໆ ຕ້ອງມີສະຕິປ້ອງກັນໄຟໄໝ້ລາມ ແລະ ມີແຜນການດັບມອດຢ່າງສັກແນ່.

**ມາດຕາ 25. ການສະກັດກັ້ນອັກຄີໄພກ່ຽວກັບວັດຖຸໄວໄຟ**

ການສະກັດກັ້ນອັກຄີໄພກ່ຽວກັບວັດຖຸໄວໄຟ ຕ້ອງປະຕິບັດດັ່ງນີ້:

1. ສະຖານທີ່ຂຸດຄົ້ນນ້ຳມັນ, ອາຍແກັດ ຫລື ທາດທີ່ເປັນອັນຕະລາຍໄໝ້ ລະເບີດ ຕ້ອງຕິດຕັ້ງລະບົບວັດຖຸອຸປະກອນເຕືອນໄພ, ວັດຖຸອຸປະກອນແກ້ໄຂການຮົ່ວໄຫລ ທີ່ທັນສະໄໝ ແລະ ມີໜ່ວຍງານຮັກສາຄວາມປອດໄພ ທີ່ເຂັ້ມງວດ;
2. ການຜະລິດ, ປຸງແຕ່ງ, ຂົນສົ່ງຜະລິດຕະພັນທາດນ້ຳມັນ, ອາຍແກັດ ແລະ ທາດທີ່ເປັນອັນຕະລາຍໄໝ້ ລະເບີດ ຕ້ອງມີລະບົບສັນຍານເຕືອນໄພສຸກເສີນ ແລະ ມາດຕະການແກ້ໄຂຢ່າງທັນການ;
3. ປໍ້ານ້ຳມັນ, ປໍ້າອາຍແກັດ ຫລື ຮ້ານຈຳໜ່າຍອາຍແກັດ ຕ້ອງປະຕິບັດຕາມລະບຽບການ ກ່ຽວກັບມາດຕະຖານເຕັກນິກ ແລະ ຮັບປະກັນຄວາມປອດໄພທາງດ້ານອັກຄີໄພ;
4. ບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບວັດຖຸໄວໄຟ ຫລື ທາດທີ່ເປັນອັນຕະລາຍໄໝ້ ລະເບີດ ຕ້ອງມີໜັງສືຢັ້ງຢືນການກວດກາຈາກກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ, ຕິດກາໝາຍຄຳເຕືອນ, ສະຫລາກລານເຄມີ ເປັນພາສາລາວ ແລະ ພາສາຕ່າງປະເທດ;
5. ຜູ້ທີ່ເຮັດວຽກໃນສະຖານທີ່ ທີ່ເປັນອັນຕະລາຍໄໝ້ ລະເບີດ ຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນຈາກກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ;
6. ພາຫະນະຂົນສົ່ງ ຫລື ວັດຖຸອຸປະກອນບັນຈຸ ນ້ຳມັນ, ອາຍແກັດ ແລະ ທາດທີ່ເປັນອັນຕະລາຍໄໝ້ ລະເບີດ ຕ້ອງໄດ້ມາດຕະຖານເຕັກນິກ.

**ມາດຕາ 26. ການສະກັດກັ້ນອັກຄີໄພ ໃນສະຖານທູດ, ສຳນັກງານ ແລະ ອົງການຈັດຕັ້ງສາກົນ**

ການສະກັດກັ້ນອັກຄີໄພ ໃນສະຖານທູດ, ສຳນັກງານ, ອົງການຈັດຕັ້ງສາກົນ ລວມທັງເຮືອນພັກຄົນຕ່າງປະເທດ ຕ້ອງມີລະບົບສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້.

**ມາດຕາ 27. ສາເຫດທີ່ພາໃຫ້ຢຸດເຊົາການເຄື່ອນໄຫວກິດຈະການ**

ບຸກຄົນ ແລະ ການຈັດຕັ້ງ ທີ່ທຳການເຄື່ອນໄຫວກິດຈະການໃດໜຶ່ງ ຈະຖືກຢຸດເຊົາຊົ່ວຄາວ ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

1. ມີຄວາມສ່ຽງຕໍ່ການໄໝ້ ລະເບີດ;
2. ລະເມີດລະບຽບການກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງຮ້າຍແຮງ;
3. ລະເມີດລະບຽບການກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ກ່າວເຕືອນມາແລ້ວ ສອງຄັ້ງ ແຕ່ພາກຍັງບໍ່ປະຕິບັດຕາມ.

ບຸກຄົນ ແລະ ການຈັດຕັ້ງ ທີ່ຖືກໃຫ້ຢຸດເຊົາກິດຈະການຊົ່ວຄາວແລ້ວນັ້ນ ຕ້ອງໄດ້ມີການປັບປຸງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ. ໃນກໍລະນີທີ່ບໍ່ມີການປັບປຸງ ແກ້ໄຂການລະເມີດດັ່ງກ່າວ ກໍຈະຖືກໃຫ້ຢຸດເຊົາການເຄື່ອນໄຫວກິດຈະການຢ່າງຖາວອນ.

**ມາດຕາ 28. ການປະກັນໄພ**

ບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການທີ່ມີຄວາມສ່ຽງຕໍ່ການໄໝ້ ລະເບີດ ຕ້ອງມີການປະກັນໄພທາງດ້ານອັກຄີໄພ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການປະກັນໄພ.

## ໝວດທີ III
## ການຕ້ານອັກຄີໄພ

**ມາດຕາ 29. ວິທີການພື້ນຖານຕ້ານອັກຄີໄພ**

ວິທີການພື້ນຖານຕ້ານອັກຄີໄພ ຕ້ອງປະຕິບັດດັ່ງນີ້:

1. ເຈົ້າຂອງສະຖານທີ່ບ່ອນເກີດເຫດໄຟໄໝ້ ຕ້ອງເປັນເຈົ້າການມອດໄຟ ພ້ອມທັງຮ້ອງຂໍຄວາມຊ່ວຍເຫລືອຈາກຜູ້ຢູ່ໃກ້ຄຽງ ແລະ ແຈ້ງໃຫ້ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພຊາບ ໃນທັນໃດ;
2. ການລະດົມກຳລັງ, ພາຫະນະ, ວັດຖຸອຸປະກອນ ເພື່ອຊ່ວຍຕ້ານອັກຄີໄພທີ່ກຳລັງເກີດຂຶ້ນນັ້ນ ຕ້ອງເຮັດຢ່າງຮີບດ່ວນ;
3. ການຈັດຕັ້ງກຳລັງຊ່ວຍເຫລືອຜູ້ຖືກເຄາະຮ້າຍ, ກອບກູ້ຊັບສິນບັດ ແລະ ຕ້ານໄຟໄໝ້ລາມ ຕ້ອງດຳເນີນຢ່າງທັນການ;
4. ການບັນຊາຕ້ານອັກຄີໄພ ຕ້ອງເປັນເອກະພາບ.

**ມາດຕາ 30. ແຜນຕ້ານອັກຄີໄພ**

ແຜນຕ້ານອັກຄີໄພ ຕ້ອງຮັບປະກັນ ດັ່ງນີ້:

1. ສ້າງແຜນວາດຂອບເຂດຂອງສຳນັກງານ ອົງການ, ບ້ານ;
2. ກຳນົດເສັ້ນທາງເຂົ້າ-ອອກ;
3. ຄາດຄະເນຈຸດທີ່ມີຄວາມສ່ຽງໃນການໄໝ້ ລະເບີດ;
4. ກຳນົດແຜນກູ້ໄພ, ຊ່ວຍຜູ້ຖືກເຄາະຮ້າຍ, ເຄື່ອນຍ້າຍ ແລະ ປົກປັກຮັກສາວັດຖຸສິ່ງຂອງ;
5. ກຳນົດແຜນຈັດວາງກຳລັງ, ພາຫະນະ, ວັດຖຸອຸປະກອນ ແລະ ກຳນົດແຫລ່ງນ້ຳມອດໄຟ;
6. ກຳນົດບຸດທະວິທີໃນການຕ້ານອັກຄີໄພ ໃຫ້ເໝາະສົມກັບສະຖານທີ່ຕົວຈິງ;
7. ສ້າງແຜນລະດົມ ກຳລັງ, ພາຫະນະ, ວັດຖຸອຸປະກອນ ເພື່ອຕ້ານອັກຄີໄພ ໃນກໍລະນີທີ່ມີໄຟໄໝ້ໃຫຍ່;
8. ສ້າງແຜນງົບປະມານ ຮັບໃຊ້ວຽກງານຕ້ານອັກຄີໄພ.

**ມາດຕາ 31. ການສ້າງແຜນ ແລະ ແຜນຝຶກຊ້ອມ ການຕ້ານອັກຄີໄພ ຂອງສຳນັກງານ ອົງການ**

ສຳນັກງານ ອົງການ ແຕ່ລະບ່ອນ ຕ້ອງມີແຜນຕ້ານອັກຄີໄພ ໂດຍແມ່ນຄະນະຮັບຜິດຊອບຂອງສຳນັກງານ ອົງການທີ່ກ່ຽວຂ້ອງນັ້ນ ເປັນຜູ້ສ້າງຂຶ້ນ ແລະ ໄດ້ຮັບການເຫັນດີຈາກກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ.

ສຳນັກງານ ອົງການ ຕ້ອງຝຶກຊ້ອມການຕ້ານອັກຄີໄພຕາມແຜນຂອງຕົນ ຢ່າງເປັນປະຈຳ ໂດຍການນຳພາຝຶກຊ້ອມຕົວຈິງຂອງກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 32. ການຕ້ານອັກຄີໄພ**

ການຕ້ານອັກຄີໄພ ຕ້ອງປະຕິບັດດັ່ງນີ້:

1. ຈັດກຳລັງຕ້ານອັກຄີໄພໃຫ້ພຽງພໍ ແລະ ອອກປະຕິບັດໜ້າທີ່ໃຫ້ທັນການ ແລະ ມີປະສິດທິຜົນ;
2. ຈັດພາຫະນະ, ວັດຖຸອຸປະກອນ, ທາດເຄມີມອດໄຟ, ແຫລ່ງນ້ຳ ແລະ ເງື່ອນໄຂອື່ນໃຫ້ຄົບຖ້ວນ;
3. ປະຕິບັດຕາມແຜນຕ້ານອັກຄີໄພ ທີ່ໄດ້ສ້າງໄວ້;
4. ຈັດໜ່ວຍແພດ ອອກປະຕິບັດໜ້າທີ່ ເພື່ອຊ່ວຍເຫລືອຜູ້ທີ່ໄດ້ຮັບບາດເຈັບ;
5. ນຳໃຊ້ງົບປະມານໃນການຕ້ານອັກຄີໄພ.

**ມາດຕາ 33. ແຫລ່ງນ້ຳ, ພາຫະນະ ແລະ ວັດຖຸອຸປະກອນຕ້ານອັກຄີໄພ**

ທຸກແຫລ່ງນ້ຳ, ພາຫະນະ ແລະ ວັດຖຸອຸປະກອນ ຕ້ອງຖືກນຳໃຊ້ເປັນກໍລະນີພິເສດເຂົ້າໃນການຕ້ານອັກຄີໄພ.

**ມາດຕາ 34. ການແຈ້ງເຫດໄຟໄໝ້**

ການແຈ້ງເຫດໄຟໄໝ້ ອາດຈະມີຂຶ້ນດ້ວຍເຄື່ອງສັນຍານ ແລະ ໂທລະສັບ. ສຳລັບໂທລະສັບຮັບແຈ້ງເຫດໄຟໄໝ້ ໃຫ້ກຳນົດເລກໝາຍເປັນເອກະພາບກັນໃນທົ່ວປະເທດ.

**ມາດຕາ 35. ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມຕ້ານອັກຄີໄພ**

ຜູ້ເຂົ້າຮ່ວມຕ້ານອັກຄີໄພ ມີຄວາມຮັບຜິດຊອບ ດັ່ງນີ້:

1. ບຸກຄົນທີ່ໄດ້ພົບເຫັນເຫດໄຟໄໝ້ ຫລື ໄດ້ຍິນສັນຍານເຕືອນໄຟໄໝ້ ຕ້ອງແຈ້ງເຫດໄຟໄໝ້ໃຫ້ບໍລິເວນອ້ອມຂ້າງທີ່ໃກ້ສຸດ ແລະ ແຈ້ງໃຫ້ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຊາບ ພ້ອມທັງເຂົ້າຮ່ວມຕ້ານອັກຄີໄພຢ່າງທັນການ;
2. ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ເມື່ອໄດ້ຮັບແຈ້ງເຫດໄຟໄໝ້ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ຕ້ອງຮີບຮ້ອນອອກປະຕິບັດໜ້າທີ່ຢ່າງທັນການ;
3. ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງການສາທາລະນະສຸກ, ຄົມມະນາຄົມ, ໄຟຟ້າ, ນໍ້າປະປາ, ອົງການຄຸ້ມຄອງໄພພິບັດ, ອົງການກາແດງ ຕ້ອງລະດົມກໍາລັງພົນ, ພາຫະນະ, ວັດຖຸ ອຸປະກອນ, ທຶນ ອອກຊ່ວຍເຫລືອ ຕ້ານອັກຄີໄພຢ່າງທັນເວລາ;
4. ທະຫານ, ຕໍາຫລວດ, ກໍາລັງປ້ອງກັນຄວາມສະຫງົບບ້ານ, ກອງຫລອນ ຕ້ອງຮັກສາຄວາມເປັນລະບຽບຮຽບຮ້ອຍ, ປ້ອງກັນສະຖານທີ່ໄຟໄໝ້ ແລະ ວັດຖຸສິ່ງຂອງ ພ້ອມທັງເຂົ້າຮ່ວມໃນການຕ້ານອັກຄີໄພ.

**ມາດຕາ 36. ການລະດົມກໍາລັງ ແລະ ພາຫະນະຕ້ານອັກຄີໄພ**

ບຸກຄົນ ແລະ ການຈັດຕັ້ງ ຕ້ອງປະກອບສ່ວນທາງດ້ານກໍາລັງ, ພາຫະນະ ແລະ ວັດຖຸອຸປະກອນ ເຂົ້າໃນການຕ້ານອັກຄີໄພ ຕາມເງື່ອນໄຂຕົວຈິງ.

ໃນການປຸກລະດົມເຂົ້າຮ່ວມການຕ້ານອັກຄີໄພນັ້ນ ຖ້າຫາກມີຜູ້ບາດເຈັບ, ເສຍຊີວິດ, ພາຫະນະ ແລະ ວັດຖຸອຸປະກອນ ເປ່ເພເສຍຫາຍ ຈະໄດ້ຮັບການປະຕິບັດນະໂຍບາຍຕາມລະບຽບການ.

**ມາດຕາ 37. ການນໍາໃຊ້ສິດໃນກໍລະນີສຸກເສີນ**

ການນໍາໃຊ້ສິດໃນກໍລະນີສຸກເສີນ ໃຫ້ປະຕິບັດດັ່ງນີ້:

1. ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີສິດນໍາກໍາລັງ, ພາຫະນະ ອອກເຮັດໜ້າທີ່ຕ້ານອັກຄີໄພຜ່ານທຸກເສັ້ນທາງ, ຜ່ານໄຟອໍານາດ, ໃຊ້ແກ, ໄຟຕາ, ໄຟຂໍທາງ, ໄຟສຸກເສີນ, ໄຫລະໄຄ່ງ, ເປີດຫວໍ, ສັນຍານອື່ນໆ. ການຜ່ານຂົວ, ຜ່ານທາງ, ຂ້າມບັກແມ່ນ ບໍ່ໄດ້ເສຍຄ່າ;
2. ໃນເວລາປະຕິບັດໜ້າທີ່ຕ້ານອັກຄີໄພນັ້ນ ລົດມອດໄຟ ມີສິດໄປກ່ອນລົດຄັນອື່ນ;
3. ໃນເວລາເກີດໄຟໄໝ້ນັ້ນ ເຈົ້າຂອງປໍ້ານໍ້າມັນ ຕ້ອງບໍລິການທຸກເວລາ;
4. ຜູ້ທີ່ຖືກລະດົມເຮັດໜ້າທີ່ຕ້ານອັກຄີໄພ ສາມາດນໍາໃຊ້ພາຫະນະຕ່າງໆ ທີ່ແລ່ນຕາມເສັ້ນທາງໄປຫາບ່ອນອັກຄີໄພເກີດຂຶ້ນ ໂດຍບໍ່ເສຍຄ່າ;
5. ກໍາລັງ, ພາຫະນະຕ່າງໆ ທີ່ຖືກລະດົມເຮັດໜ້າທີ່ຕ້ານອັກຄີໄພ ມີສິດໃຊ້ແກ, ເປີດໄຟຕາ, ໄຟຂໍທາງ, ໄຟສຸກເສີນ ແລະ ສັນຍານອື່ນໆ;
6. ກໍາລັງຕໍາຫລວດຈະລາຈອນ ແລະ ກໍາລັງປ້ອງກັນອື່ນ ຕ້ອງອໍານວຍຄວາມສະດວກໃຫ້ແກ່ກໍາລັງ ແລະ ພາຫະນະ ຕ້ານອັກຄີໄພ;

7. ສຳລັບຜູ້ສັນຈອນຕາມທ້ອງຖະໜົນ ຕ້ອງຫລີກທາງໃຫ້ກຳລັງ ແລະ ພາຫະນະ ຕ້ານອັກ ຄີໄພ.

**ມາດຕາ 38. ການຕ້ານອັກຄີໄພ ໃນສະຖານທູດ, ສຳນັກງານ ແລະ ອົງການຈັດຕັ້ງສາກົນ**

ໃນກໍລະນີທີ່ມີອັກຄີໄພເກີດຂຶ້ນຢູ່ສະຖານທູດ, ສຳນັກງານ, ອົງການຈັດຕັ້ງສາກົນ, ເຮືອນພັກຂອງຄົນຕ່າງປະເທດທີ່ມີອະພິສິດທາງການທູດນັ້ນ ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ເຂົ້າຊ່ວຍເຫລືອຕາມການຮ້ອງຂໍຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ປະຕິບັດຕາມລະບຽບການສາກົນ.

**ມາດຕາ 39. ຜູ້ບັນຊາຕ້ານອັກຄີໄພ**

ຜູ້ບັນຊາຕ້ານອັກຄີໄພ ແມ່ນ ຜູ້ທີ່ມີຕຳແໜ່ງ ຫລື ຂັ້ນສູງກວ່າໝູ່ ຂອງກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ມີໜ້າຢູ່ໃນສະຖານທີ່ອັກຄີໄພເກີດຂຶ້ນ.

ໃນກໍລະນີທີ່ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ບໍ່ທັນໄປເຖິງສະຖານທີ່ໄຟໄໝ້ ຕ້ອງປະຕິບັດດັ່ງນີ້:

1. ຫົວໜ້າ ຫລື ຮອງຫົວໜ້າ ສຳນັກງານ ອົງການ ເປັນຜູ້ບັນຊາ. ໃນກໍລະນີທີ່ ບຸກຄົນດັ່ງກ່າວບໍ່ຢູ່ ແມ່ນ ຫົວໜ້າປ້ອງກັນສຳນັກງານ ອົງການ ຫລື ຮອງຫົວໜ້າ ຫລື ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ບັນຊາຕ້ານອັກຄີໄພ;
2. ເຈົ້າເມືອງ, ຫົວໜ້າເທດສະບານ, ນາຍບ້ານ ເປັນຜູ້ບັນຊາຕ້ານອັກຄີໄພ. ໃນກໍລະນີທີ່ ບຸກຄົນດັ່ງກ່າວບໍ່ຢູ່ ແມ່ນ ຜູ້ຮອງ, ຫົວໜ້າໜ່ວຍສະກັດກັ້ນ ແລະ ຕ້ານອັກຄີໄພ ຫລື ຜູ້ ທີ່ໄດ້ຮັບມອບໝາຍ ເປັນຜູ້ບັນຊາຕ້ານອັກຄີໄພ;
3. ເຈົ້າຂອງ ຫລື ຜູ້ຂັບຂີ່ ພາຫະນະຂົນສົ່ງ ເປັນຜູ້ບັນຊາຕ້ານອັກຄີໄພ ເມື່ອພາຫະນະຂອງຕົນ ເກີດໄຟໄໝ້;
4. ຫົວໜ້າ ຫລື ຮອງຫົວໜ້າ ຂະແໜງການປ່າໄມ້ ຫລື ຜູ້ທີ່ໄດ້ຮັບມອບໝາຍ ຫລື ເຈົ້າຂອງປ່າໄມ້ ຫລື ນາຍບ້ານ ເປັນຜູ້ບັນຊາຕ້ານອັກຄີໄພ ເມື່ອເກີດໄຟໄໝ້ປ່າ.

**ມາດຕາ 40. ໜ້າທີ່ ແລະ ສິດ ຂອງຜູ້ບັນຊາຕ້ານອັກຄີໄພ**

ຜູ້ບັນຊາການ ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ນຳພາ, ບັນຊາກຳລັງ, ນຳໃຊ້ພາຫະນະ, ວັດຖຸອຸປະກອນ ແລະ ອອກປະຕິບັດໜ້າທີ່ຕ້ານອັກຄີໄພໃຫ້ທັນເວລາ;
2. ກຳນົດຂອບເຂດຕ້ານອັກຄີໄພ, ວິທີການຕ້ານອັກຄີໄພ, ນຳໃຊ້ພື້ນທີ່ ຫລື ສະຖານທີ່ໃກ້ຄຽງ ເພື່ອຕ້ານອັກຄີໄພ;
3. ບໍ່ອະນຸຍາດໃຫ້ບຸກຄົນ ຫລື ພາຫະນະ ຜ່ານໄປມາໃນຂົງເຂດຕ້ານອັກຄີໄພ;
4. ລະດົມກຳລັງ, ພາຫະນະ, ວັດຖຸອຸປະກອນ ຈາກສຳນັກງານ ອົງການ, ຄອບຄົວ ແລະ ບຸກຄົນ ເຂົ້າຮ່ວມຕ້ານອັກຄີໄພ.

ໃນກໍລະນີທີ່ຈຳເປັນ ຜູ້ບັນຊາການຂອງກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ຍັງມີສິດຕັດສິນໃນການທັບມ້າງ ຫລື ຍົກຍ້າຍສິ່ງທີ່ກີດຂວາງຕ່າງໆ ເພື່ອກອບກູ້ເອົາຊີວິດ, ຊັບສິນຂອງພົນລະເມືອງ ແລະ ສະກັດກັ້ນບໍ່ໃຫ້ໄຟໄໝ້ລາມ.

**ມາດຕາ 41. ການແກ້ໄຂກໍລະນີທີ່ເກີດອັກຄີໄພ ຢ່າງຮ້າຍແຮງ ແລະ ແກ່ຍາວ**

ຫົວໜ້າ ສຳນັກງານ ອົງການ, ເມືອງ, ເທດສະບານ, ບ້ານ ບ່ອນທີ່ເກີດອັກຄີໄພ ຢ່າງຮ້າຍແຮງ ແລະ ແກ່ຍາວ ມີໜ້າທີ່ຮັບຜິດຊອບຊີ້ນຳ, ບັນຊາຕ້ານອັກຄີໄພ ແລະ ສ້າງເງື່ອນໄຂຕ່າງໆ ໃຫ້ແກ່ການຕ້ານອັກຄີໄພ. ເມື່ອເກີນຄວາມສາມາດຂອງຕົນແລ້ວ ຕ້ອງລາຍງານໃຫ້ຂະແໜງການປ້ອງກັນຄວາມສະຫງົບ ເພື່ອປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຢ່າງຮີບດ່ວນແລ້ວພ້ອມກັນແກ້ໄຂບັນຫາ.

ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ຕ້ອງລາຍງານໃຫ້ນາຍົກລັດຖະມົນຕີເປັນຜູ້ຕົກລົງແກ້ໄຂ.

**ມາດຕາ 42. ຄວາມຮັບຜິດຊອບຂອງພາກສ່ວນອື່ນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ ໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 43. ການປ້ອງກັນ ແລະ ຊັນນະສູດ ສະຖານທີ່ເກີດອັກຄີໄພ**

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີໜ້າທີ່ຮັບຜິດຊອບຈັດຕັ້ງປ້ອງກັນສະຖານທີ່ເກີດອັກຄີໄພ.

ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມຊັນນະສູດສະຖານທີ່ເກີດອັກຄີໄພ, ພິຈາລະນາສາເຫດ, ສະຫລຸບຜົນເສຍຫາຍຈາກອັກຄີໄພ ແລ້ວນຳສົ່ງໃຫ້ອົງການສືບສວນ-ສອບສວນ ດຳເນີນຄະດີຕໍ່ໄປ.

**ມາດຕາ 44. ການແກ້ໄຂຜົນເສຍຫາຍຈາກອັກຄີໄພ**

ການແກ້ໄຂຜົນເສຍຫາຍຈາກອັກຄີໄພ ຂອງຂະແໜງການ ຫລື ພາກສ່ວນ ບ່ອນທີ່ເກີດໄຟໄໝ້ ໃຫ້ປະຕິບັດດັ່ງນີ້:

1. ຈັດຕັ້ງຊ່ວຍເຫລືອຜູ້ຖືກເຄາະຮ້າຍ, ຜູ້ຖືກເສຍຫາຍ ຈາກອັກຄີໄພ ເພື່ອບັນເທົາທຸກ;
2. ຟື້ນຟູ ບູລະນະ, ທຳຄວາມສະອາດ ສະຖານທີ່ບ່ອນເກີດໄຟໄໝ້ໃຫ້ເປັນລະບຽບຮຽບຮ້ອຍ;
3. ຟື້ນຟູການຜະລິດ, ການເຄື່ອນໄຫວທາງດ້ານເສດຖະກິດ, ການບໍລິຫານ ແລະ ການເຄື່ອນໄຫວອື່ນ ໃຫ້ຄືນສູ່ສະພາບປົກກະຕິເທື່ອລະກ້າວ.

## ໝວດທີ IV
## ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 45. ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ເຄື່ອງຮັບໃຊ້ຕ່າງໆ ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເປັນຕົ້ນ ລົດມອດໄຟ, ລົດບັນທຸກນ້ຳມອດໄຟ, ລົດຍົກມອດໄຟ, ລົດກູ້ໄພ, ອຸປະກອນເຕືອນໄຟສຸກເສີນ, ອຸປະກອນປ້ອງກັນອັກຄີໄພ, ບົ້ງມອດໄຟ, ອ່າງເກັບນ້ຳ, ທໍ່ອກນ້ຳ, ຂັ້ນໄດ, ລົດພະຍາບານ ແລະ ວັດຖຸອຸປະກອນພື້ນເມືອງ.

**ມາດຕາ 46. ການປະກອບພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນສຳນັກງານ ອົງການ, ບ້ານ ແລະ ຄອບຄົວ**

ການປະກອບພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນສຳນັກງານ ອົງການ, ບ້ານ ແລະ ຄອບຄົວ ຕ້ອງປະຕິບັດດັ່ງນີ້:

1. ສຳນັກງານ ອົງການ ຕ້ອງໄດ້ຕິດຕັ້ງ ວັດຖຸອຸປະກອນ, ປະກອບພາຫະນະ ສະກັດກັ້ນ ແລະ ຕ້ານອັກຄີໄພ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນດ້ວຍຕົນເອງ ຕາມລະບຽບການ;
2. ອົງການປົກຄອງບ້ານ ຕ້ອງປະກອບພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ໜ່ວຍສະກັດກັ້ນ ແລະ ຕ້ານອັກຄີໄພຂອງບ້ານ ຕາມເງື່ອນໄຂຕົວຈິງ;
3. ບຸກຄົນ ແລະ ການຈັດຕັ້ງ ທີ່ທຳການຜະລິດ, ດຳເນີນທຸລະກິດ, ເຈົ້າຂອງພາຫະນະ ຂົນສົ່ງ ຕ້ອງປະກອບວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ຄອບຄົວ ຕ້ອງກະກຽມເງື່ອນໄຂ ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ.

**ມາດຕາ 47. ການປະກອບພາຫະນະ, ວັດຖຸອຸປະກອນ ໃຫ້ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ລັດ ເປັນຜູ້ສະໜອງງົບປະມານ, ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງພຽງພໍ, ຄົບຊຸດ ແລະ ທັນສະໄໝ ເທື່ອລະກ້າວ.

ລັດ ສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນຊ່ວຍເຫລືອທາງດ້ານ ທຶນຮອນ, ພາຫະນະ, ວັດຖຸອຸປະກອນ ໃຫ້ແກ່ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມຄວາມສາມາດຕົວຈິງ.

**ມາດຕາ 48. ການຄຸ້ມຄອງ, ນຳໃຊ້ ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ການຄຸ້ມຄອງ, ນຳໃຊ້ ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງໃຫ້ຮັບປະກັນຄຸນນະພາບ ເພື່ອກຽມພ້ອມຕ້ານອັກຄີໄພໃຫ້ທັນເວລາ.

ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ນອກຈາກ ຮັບໃຊ້ວຽກງານຕ້ານອັກຄີໄພແລ້ວ ຍັງຮັບໃຊ້ເຂົ້າໃນວຽກງານຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມອີກດ້ວຍ.

**ມາດຕາ 49. ການຜະລິດ, ການນໍາເຂົ້າພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ**

ການຜະລິດ ຫລື ການນໍາເຂົ້າພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ຕ້ອງສັບປະກັນຄຸນນະພາບ, ເໝາະສົມກັບເງື່ອນໄຂຂອງ ສປປ ລາວ ແລະ ໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ ໂດຍສົມທົບກັບກະຊວງອື່ນທີ່ກ່ຽວຂ້ອງ.

## ໝວດທີ V
## ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 50. ປະເພດກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ກໍາລັງຫລັກແຫລ່ງ, ເປັນໃຈກາງເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃນຂອບເຂດທົ່ວປະເທດ ຊຶ່ງປະກອບດ້ວຍ:

1. ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສໍານັກງານ ອົງການ;
3. ກໍາລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງບ້ານ.

**ມາດຕາ 51. ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ**

ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ກໍາລັງທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ, ມີການຈັດຕັ້ງແຕ່ສູນກາງຮອດທ້ອງຖິ່ນ, ມີພາລະບົດບາດເປັນເສນາທິການໃຫ້ຂະແໜງການປ້ອງກັນຄວາມສະຫງົບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພໃນຂອບເຂດທົ່ວປະເທດ.

**ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີໜ້າທີ່ ແລະ ສິດ ດັ່ງນີ້:**

1. ຄົ້ນຄວ້າລະບຽບກົດໝາຍ, ແຜນການ, ວິທີການ ແລະ ມາດຕະການສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອສະເໜີຂັ້ນເທິງປະກາດໃຊ້;
2. ໂຄສະນາ, ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສະ ກັດກັ້ນ ແລະ ຕ້ານອັກຄີໄພ;
3. ຄົ້ນຄວ້າ ແລະ ນໍາໃຊ້ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານ ອັກຄີໄພ;
4. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ບໍາລຸງ, ກໍ່ສ້າງ, ຝຶກອົບຮົມວຽກງານວິຊາສະເພາະ ແລະ ຝຶກຊ້ອມແຜນສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;

6. ກວດຜ່ານການອອກແບບ, ອອກໃບຢັ້ງຢືນ ແລະ ຕິດຕັ້ງວັດຖຸອຸປະກອນສະກັດກັ້ນ ແລະ ຕ້ານອັກຄີໄພ;
7. ກະກຽມ ງົບປະມານ, ກຳລັງ, ພາຫະນະ, ວັດຖຸອຸປະກອນ ແລະ ອອກປະຕິບັດໜ້າທີ່ ຢ່າງທັນການ ເມື່ອມີອັກຄີໄພເກີດຂຶ້ນ;
8. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການຄຸ້ມຄອງ, ກວດກາ, ອະນຸຍາດ ການຜະລິດ, ການນຳເຂົ້າພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ;
9. ກວດກາເຕັກນິກ, ແກ້ໄຂການລະເມີດລະບຽບກົດໝາຍກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
10. ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ປຸກລະດົມຂະບວນການມະຫາຊົນ ເຂົ້າຮ່ວມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
11. ເຂົ້າຮ່ວມດຳເນີນການສືບສວນສາເຫດສະຖານທີ່ເກີດອັກຄີໄພ;
12. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52. ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ ອົງການ, ບ້ານ**

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ ອົງການ, ບ້ານ ແມ່ນ ກຳລັງໜຶ່ງທີ່ ໄດ້ຮັບການສ້າງຕັ້ງຂຶ້ນໂດຍສຳນັກງານ ອົງການ, ອົງການປົກຄອງບ້ານ ແລະ ຢູ່ພາຍໃຕ້ການຊີ້ນຳ ທາງດ້ານວິຊາສະເພາະ ຂອງກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ.

ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ ອົງການ, ບ້ານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ຄົ້ນຄວ້າ ວາງລະບຽບການສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ກວດກາການນຳໃຊ້ມາດຕະຖານເຕັກນິກກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ຈັດຕັ້ງຝຶກຊ້ອມກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຢ່າງເປັນປົກກະຕິ;
6. ກະກຽມ ງົບປະມານ, ກຳລັງ, ພາຫະນະ ແລະ ວັດຖຸອຸປະກອນ ເພື່ອປະຕິບັດໜ້າທີ່ຕ້ານອັກຄີໄພ;
7. ປຸກລະດົມພະນັກງານ ແລະ ປະຊາຊົນ ເຂົ້າຮ່ວມຕ້ານອັກຄີໄພ;
8. ປະສານສົມທົບກັບກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ;
9. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ VI
## ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 53. ການສ້າງຕັ້ງກອງທຶນ**

ລັດ ສ້າງຕັ້ງກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພຂຶ້ນ ເພື່ອຮັບປະກັນການປັບປຸງ ແລະ ພັດທະນາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ມີປະສິດທິຜົນ.

**ມາດຕາ 54. ແຫລ່ງຂອງກອງທຶນ**

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ມາຈາກງົບປະມານຂອງລັດ, ການປະກັນໄພອັກຄີໄພ ຕາມລະບຽບການ, ການປະກອບສ່ວນຂອງບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ແລະ ຈາກການເຄື່ອນໄຫວກິດຈະກຳອື່ນໆ.

**ມາດຕາ 55. ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນ**

ກະຊວງການປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມລະບຽບການຂອງກອງທຶນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານ.

ກອງທຶນສະກັດກັ້ນ ແລະ ຕ້ານອັກຄີໄພ ນຳໃຊ້ເຂົ້າໃນການຈັດຊື້ພາຫະນະ, ວັດຖຸອຸປະກອນ, ການພັດທະນາດ້ານບຸກຄະລາກອນ, ການຍົກລະດັບຄວາມຮູ້ຄວາມສາມາດ, ການຝຶກອົບຮົມ, ຝຶກຊ້ອມ, ການໂຄສະນາ ເຜີຍແຜ່ລະບຽບກົດໝາຍ, ການປະຕິບັດນະໂຍບາຍກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ອື່ນໆ.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 56. ຂໍ້ຫ້າມສຳລັບ ບຸກຄົນ ແລະ ການຈັດຕັ້ງ**

ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງ ມີດັ່ງນີ້:

1. ເຮັດໃຫ້ເກີດໄຟໄໝ້ ລະເບີດ ທີ່ສ້າງຜົນເສຍຫາຍຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນຂອງລັດ, ລວມໝູ່, ພົນລະເມືອງ;
2. ຂັດຂວາງການປະຕິບັດໜ້າທີ່ ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ສວຍໂອກາດລັກເອົາຊັບສິນໃນເວລາເກີດອັກຄີໄພ;
4. ແຈ້ງເທັດກ່ຽວກັບເຫດໄຟໄໝ້;
5. ຜະລິດ, ເກັບມ້ຽນ, ຂົນສົ່ງ, ຄຸ້ມຄອງ, ນຳໃຊ້, ຄ້າຂາຍ ວັດຖຸທີ່ເປັນອັນຕະລາຍຕໍ່ການໄໝ້ ລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຊື້-ຂາຍ ປັ້ງມອດໄຟ, ທໍ່ວກ່ອກນ້ຳມອດໄຟ ຫລື ອຸປະກອນມອດໄຟທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດ;

7. ລະເມີດລະບຽບການກ່ຽວກັບການຄຸ້ມຄອງ, ນຳໃຊ້ແຫຼ່ງໄຟ, ແຫຼ່ງຄວາມຮ້ອນ, ມາດຕະຖານການສະກັດກັ້ນ ແລະ ຕ້ານອັກຄີໄພ;
8. ດຳເນີນກິດຈະການທີ່ມີຄວາມເປັນອັນຕະລາຍຕໍ່ການໄໝ້ ລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກຳລັງຕຳຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ;
9. ມອບ-ຮັບ, ນຳໃຊ້ກິດຈະການ ທີ່ມີຄວາມເປັນອັນຕະລາຍຕໍ່ການໄໝ້ ລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
10. ທຳລາຍ, ປ່ຽນແປງ, ເຄື່ອນຍ້າຍ ປ້າຍຊີ້ບອກທາງສຸກເສີນ, ຫົວໜີໄຟ, ພາຫະນະ, ວັດຖຸອຸປະກອນ ສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ອື່ນໆ;
11. ຈູດໄຮ່, ຈູດສວນ, ຈູດປ່າ ແລະ ຈູດສິ່ງອື່ນ ຢ່າງຊະຊາຍ;
12. ຂໍ້ຫ້າມອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 57. ຂໍ້ຫ້າມສຳລັບກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ**

ຂໍ້ຫ້າມສຳລັບກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ມີດັ່ງນີ້:
1. ປະລະໜ້າທີ່ ຫຼື ບໍ່ປະຕິບັດຄຳສັ່ງ ໃນເວລາປະຈຳການ ຫຼື ເວລາປະຕິບັດໜ້າທີ່ຕ້ານອັກຄີໄພ;
2. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ອອກເຄື່ອນໄຫວກວດກາເຕັກນິກ, ຕິດຕັ້ງວັດຖຸອຸປະກອນ ແລະ ອອກໃບອະນຸຍາດ ໂດຍບໍ່ຖືກຕ້ອງ;
3. ສວຍໂອກາດ, ປິດບັງ, ຍັກຍອກເອົາວັດຖຸອຸປະກອນສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ຮຽກຄ່າຕອບແທນ ໃນການປະຕິບັດໜ້າທີ່ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

## ໝວດທີ VIII
## ການຄຸ້ມຄອງ ແລະ ກວດກາ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ

**ມາດຕາ 58. ອົງການຄຸ້ມຄອງ**

ອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ມີດັ່ງນີ້:
- ກະຊວງປ້ອງກັນຄວາມສະຫງົບ;
- ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ;
- ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ;
- ກຳລັງປ້ອງກັນຄວາມສະຫງົບບ້ານ.

**ມາດຕາ 59. ໜ້າທີ່ ແລະ ສິດ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ ແລະ ສິດ ດັ່ງນີ້:
1. ຄົ້ນຄວ້າຮ່າງ ນະໂຍບາຍ ແລະ ແຜນຍຸດທະສາດ, ກົດໝາຍ, ໂຄງການ, ແຜນສະກັດກັ້ນ ແລະ ຕ້ານອັກຄີໄພໃນຂອບເຂດທົ່ວປະເທດ;

2. ອອກລະບຽບການກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ລະບຽບກົດໝາຍ, ຄວາມຮູ້ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດໜ້າທີ່ຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງຂັ້ນລຸ່ມຖັດຕົນ;
5. ກວດຜ່ານ ແລະ ອອກໃບອະນຸຍາດ ແຜນສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການປຸກສ້າງ, ຕໍ່ເຕີມ, ປ່ຽນແປງລັກສະນະນຳໃຊ້ ກ່ຽວກັບຄວາມປອດໄພທາງດ້ານອັກຄີໄພ;
6. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
7. ກໍ່ສ້າງ, ບຳລຸງ, ຍົກລະດັບໃຫ້ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ໃຫ້ເຂັ້ມແຂງ ເທື່ອລະກ້າວ;
8. ປຸກລະດົມຂະບວນການມະຫາຊົນ ເຂົ້າຮ່ວມເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
9. ສ້າງລະບົບສື່ສານ ເພື່ອຄຸ້ມຄອງ, ຊີ້ນຳບັນຊາ ການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
10. ແກ້ໄຂຄຳສະເໜີ ທີ່ມີການພົວພັນເຖິງຂົງເຂດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
11. ສົ້ນແຜນງົບປະມານຈັດຊື້ພາຫະນະ ແລະ ວັດຖຸອຸປະກອນ ໃຫ້ກຳລັງຕຳຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ;
12. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມການເຫັນດີຂອງລັດຖະບານ;
14. ສະຫລຸບ ສັງລວມສະພາບການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ແລ້ວລາຍງານຕໍ່ລັດຖະບານ ຢ່າງເປັນປົກກະຕິ;
15. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 60. ໜ້າທີ່ ແລະ ສິດ ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນແຜນການຂອງກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ເພື່ອຫັນເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາ, ເຜີຍແຜ່, ແນະນຳ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງຂັ້ນລຸ່ມຖັດຕົນ;
4. ກວດຜ່ານ ແລະ ອອກໃບອະນຸຍາດແຜນສະກັດກັ້ນ ແລະ ຕ້ານອັກຄີໄພ ໃນການປຸກສ້າງ, ຕໍ່ເຕີມ, ປ່ຽນແປງລັກສະນະນຳໃຊ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
6. ຈັດຕັ້ງບຳລຸງ, ກໍ່ສ້າງ ແລະ ຄຸ້ມຄອງ ກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຕາມຄວາມຮັບຜິດຊອບຂອງຕົນ;
7. ຈັດຕັ້ງກຳລັງປະຈຳການຕະຫລອດ ຊາວສີ່ ຊົ່ວໂມງ ເພື່ອກຽມພ້ອມອອກຕ້ານອັກຄີໄພ ຢ່າງທັນການ;
8. ແກ້ໄຂຄຳສະເໜີທີ່ພົວພັນເຖິງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
9. ສ້າງແຜນ ແລະ ຄຸ້ມຄອງ ນຳໃຊ້ງົບປະມານ, ພາຫະນະ, ວັດຖຸອຸປະກອນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
10. ປະສານສົມທົບກັບພາກສ່ວນອື່ນ ໃນຂອບເຂດຕົນຮັບຜິດຊອບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການອະນຸຍາດຂອງຂັ້ນເທິງ;
12. ສະຫລຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ຂັ້ນເທິງ;
13. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 61. ໜ້າທີ່ ແລະ ສິດ ຂອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແຜນການຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະ ຄອນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ໂຄສະນາ, ເຜີຍແຜ່, ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສຳນັກງານ ອົງການ ຂັ້ນເມືອງ ແລະ ບ້ານ;
3. ຈັດຕັ້ງກຳລັງປະຈຳການຕະຫລອດ ຊາວສີ່ ຊົ່ວໂມງ ເພື່ອກຽມພ້ອມອອກຕ້ານອັກຄີໄພ ຢ່າງທັນການ;
4. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
5. ປຸກລະດົມປະຊາຊົນເຂົ້າຮ່ວມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
6. ແກ້ໄຂຄຳສະເໜີທີ່ພົວພັນເຖິງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
7. ປະສານສົມທົບກັບພາກສ່ວນອື່ນ ໃນຂອບເຂດຕົນຮັບຜິດຊອບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
8. ສະຫລຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ຂັ້ນເທິງ;
9. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 62. ໜ້າທີ່ ແລະ ສິດ ຂອງກຳລັງປ້ອງກັນຄວາມສະຫງົບບ້ານ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ກຳລັງປ້ອງກັນຄວາມສະຫງົບບ້ານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ເຜີຍແຜ່, ສຶກສາອົບຮົມ ປະຊາຊົນ ໃຫ້ເຊື່ອມຊຶມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ສ້າງກົດລະບຽບຂອງບ້ານ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ;
3. ສ້າງແຜນສະກັດກັ້ນ ແລະ ຕ້ານອັກຄີໄພ;
4. ກະກຽມວັດຖຸອຸປະກອນ, ປົກປັກຮັກສາແຫລ່ງນ້ຳ ແລະ ກ໋ອກນ້ຳ ເພື່ອຮັບປະກັນການຕ້ານອັກຄີໄພ;
5. ປຸກລະດົມປະຊາຊົນເຂົ້າຮ່ວມວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
6. ປະສານສົມທົບກັບພາກສ່ວນອື່ນ ໃນຂອບເຂດຕົນຮັບຜິດຊອບ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
7. ຈັດຕັ້ງ, ຝຶກຊ້ອມກຳລັງຕ້ານອັກຄີໄພ, ເຄື່ອນຍ້າຍ ແລະ ປົກປັກຮັກສາວັດຖຸສິ່ງຂອງໃນເວລາເກີດອັກຄີໄພ;
8. ສະຫລຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ຕໍ່ກອງບັນຊາການ ປກສ ເມືອງ, ເທດສະບານ;
9. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 63. ອົງການກວດກາ**

ອົງການກວດກາວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້.

**ມາດຕາ 64. ໜ້າທີ່ ແລະ ສິດ ຂອງອົງການກວດກາ**

ອົງການກວດກາ ມີໜ້າທີ່ ແລະ ສິດຕົ້ນຕໍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາ ການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
2. ກວດກາ ແຜນ, ພາຫະນະ, ວັດຖຸອຸປະກອນ ແລະ ມາດຕະຖານເຕັກນິກ ກ່ຽວກັບການສະກັດກັ້ນ ແລະ ຕ້ານອັກຄີໄພ ລວມທັງ ກວດກາເຕັກນິກຄວາມປອດໄພ ທາງດ້ານອັກຄີໄພ;
3. ກວດກາການປະຕິບັດໜ້າທີ່ວຽກງານຂອງກຳລັງສະກັດກັ້ນ ແລະ ຕ້ານອັກຄີໄພ ;
4. ກວດກາ ການຮັບປະກັນໄພຂອງບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນກິດຈະການທີ່ມີຄວາມສ່ຽງ.

ມາດຕາ 65. ຮູບການການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ;
2. ການກວດການອກແຜນການໂດຍແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

## ໝວດທີ IX
## ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ຂອງກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ

ມາດຕາ 66. **ເຄື່ອງແບບ ແລະ ເຄື່ອງໝາຍ**

ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີເຄື່ອງແບບ, ເຄື່ອງໝາຍສະເພາະ ຊຶ່ງໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ໃນເວລາປະຕິບັດໜ້າທີ່ຕ້ານອັກຄີໄພ ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີເຄື່ອງນຸ່ງວິຊາສະເພາະປ້ອງກັນສຸຂະພາບ.

ມາດຕາ 67. **ຕາປະທັບ**

ໃນການເຄື່ອນໄຫວວຽກງານຂອງຕົນ ກໍາລັງຕໍາຫລວດສະກັດກັ້ນ ແລະ ຕ້ານອັກຄີໄພ ມີຕາປະທັບສະເພາະຂອງຕົນ ຊຶ່ງໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 68. **ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 69. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປະຕິບັດມາດຕະການທາງວິໄນ, ທາງແພ່ງ ຫລື ຖືກດໍາເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 70. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 71. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງທີ່ກສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ